ກະຊວງ ສຶກສາ ຣັດ NSW

## Notice of suspension

### Using the telephone interpreter service to contact the school

# ການແຈ້ງການສັ່ງພັກຮຽນ

## ໃຊ້ບໍລິການນາຍພາສາທາງໂທລະສັບເພື່ອຕິດຕໍ່ໂຮງຮຽນ

ຊື່ນັກຮຽນ
Name of student

ຊື່ພໍ່ແມ່/ຜູ້ດູແລ ທີ່ຮັກແພງ

ຈົດໝາຍທີ່ຄັດຕິດມານີ້ອະທິບາຍລາຍລະອຽດຂອງຄໍາເຕືອນຢ່າງເປັນທາງການເພື່ອສັ່ງພັກຮຽນທີ່ຂ້າພະເຈົ້າໄດ້ອອກໃຫ້ລູກຂອງທ່ານໂດຍສອດຄ່ອງກັບນະໂຍບາຍຄວາມປະພຶດນັກສຶກສາຂອງກະຊວງສຶກສາຂອງ ຣັດ NSW ແລະຂັ້ນຕອນການສັ່ງພັກຮຽນ ແລະ ການໄລ່ອອກ.

ຈົດໝາຍສະບັບນີ້ຂໍເຊີນທ່ານເຂົ້າຮ່ວມກອງປະຊຸມເພື່ອປຶກສາຫາລືກ່ຽວກັບການສັງພັກຮຽນ ແລະ ເພື່ອວາງແຜນການສະໜັບສະໜູນລູກຂອງທ່ານໃນເວລາທີ່ພວກເຂົາກັບຄືນໂຮງຮຽນ. ໃນເວລາທີ່ໂຮງຮຽນຕິດຕໍ່ທ່ານ ກະລຸນາແຈ້ງໃຫ້ພວກເຮົາຊາບຖ້າວ່າທ່ານຕ້ອງການນາຍພາສາມາທີ່ກອງປະຊຸມແລະພວກເຮົາຈະຈັດໃຫ້. ຖ້າຫາກທ່ານມີຄວາມຫຍຸ້ງຍາກໃນການເຂົ້າໃຈຈົດໝາຍທີ່ຄັດຕິດມານີ້, ກະລຸນາຕິດຕໍ່ຫາໂຮງຮຽນເພື່ອໃຫ້ພວກເຮົາອະທິບາຍໄດ້.

ຄັດຕິດມາພ້ອມນີ້ແມ່ນຂໍ້ມູນທີ່ທ່ານຕ້ອງການຮູ້ຖ້າລູກຂອງທ່ານຖືກສັ່ງພັກຮຽນ.

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອຈາກນາຍພາສາໃນເວລາຕິດຕໍ່ໂຮງຮຽນ, ກະລຸນາໂທຫາ ເບີ 131 450 ແລະຂໍເອົານາຍພາສາທີ່ປາກພາສາຂອງທ່ານ. ບອກຜູ້ຮັບສາຍເບີໂທລະສັບທີ່ທ່ານຕ້ອງການໂທຫາ ແລະ ພວກເຂົາຈະຫານາຍພາສາໃນສາຍເພື່ອຊ່ວຍໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.

ຊື່ຂອງທ່ານຄູໃຫຍ່
Name of Principal

ເບີໂທລະສັບຂອງທ່ານຄູໃຫຍ່
Principal’s phone number



NSW GOVERNMENT